ວາລະສານວິທະຍາສາດສັງຄົມ (ວວສ) ສະບັບທີ 26 ຊຸດທີ 1 (2026) 18-27

ວາລະສານວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ

ລະຫັດປະຈໍາວາລະສານສາກົນ ISSN: 2664-6331 | E-ISSN: 3104-8536

Homepage: https://ssj.sjnl.la/

https://doi.org/10.71026/ss.2026.01003




# ທ່າແຮງຂອງການພັດທະນາການທ່ອງທ່ຽວທຳມະຊາດເພື່ອສົ່ງເສີມການດຳລົງຊີບແບບຍືນຍົງຂອງຊຸມຊົນທ້ອງຖິ່ນ ໃນເຂດປ່າສະຫງວນແຫ່ງຊາດພູຊຽງທອງ ແຂວງຈຳປາສັກ

ຄຳສະໄຫວ ປະສານໃຈ, ວິໄລທ່ຽງ ສີສຸວົງ, ແສງເດືອນ ອຸໄລແສງ, ຄຳວອນ ຄອນວິຊາ ແລະ ພົນນິກອນ ສຸຂະເສີມ

ຄະນະວິທະຍາສາດສັງຄົມ, ມະຫາວິທະຍາໄລແຫ່ງຊາດ

ອີເມວ: k.pasancha@nuol.edu.la

**ຂໍ້ມູນບົດຄວາມ:** ວັນທີສົ່ງ 16/8/2025 ວັນທີປັບປຸງ 16/12/2025 ວັນທີຕອບຮັບ 30/12/2025 ວັນທີອອນລາຍ 22/02/2026

**ບົດຄັດຫຍໍ້**

ການຄົ້ນຄວ້າທ່າແຮງການທ່ອງທ່ຽວທຳມະຊາດເພື່ອສົ່ງເສີມການດຳລົງຊີບແບບຍືນຍົງຂອງຊຸມຊົນໃນປ່າສະຫງວນພູຊຽງທອງ, ແຂວງຈຳປາສັກ. ໂດຍມີຈຸດປະສົງຄື: ສຶກສາບົດບາດຂອງປ່າສະຫງວນຕໍ່ການພັດທະນາການທ່ອງທ່ຽວແບບທຳມະຊາດ ແລະ ການດຳລົງຊີບ, ສຶກສາແຜນຍຸດທະສາດ ແລະ ສິ່ງທ້າທາຍ, ພ້ອມທັງປະເມີນທ່າແຮງຂອງການພັດທະນາຕໍ່ການດຳລົງຊີບແບບຍືນຍົງຂອງຊຸມຊົນ. ການຄົ້ນຄວ້າໃຊ້ວິທີການຄຸນະພາບ, ເກັບກຳຂໍ້ມູນຈາກການສຳພາດເຈາະຈົງ, ການສັງເກດ, ແລະ ເອກະສານທີ່ກ່ຽວຂ້ອງຈາກພາກລັດ (ກະຊວງ, ແຂວງ, ເມືອງ) ແລະ ຕົວແທນຊຸມຊົນບ້ານສົງສຳພັນ ແລະ ບ້ານສຸລະ. ຂໍ້ມູນຖືກວິເຄາະໂດຍການຈັດໝວດໝູ່ ແລະ ຕີຄວາມໝາຍຕາມແນວຄິດ-ທິດສະດີທີ່ກ່ຽວຂ້ອງ. ຜົນການສຶກສາພົບວ່າ:

ປ່າສະຫງວນແຫ່ງຊາດພູຊຽງທອງມີບົດບາດສຳຄັນຫຼາຍຕໍ່ການພັດທະນາການທ່ອງທ່ຽວທາງທຳມະຊາດ ແລະ ການດຳລົງຊີບຂອງຊຸມຊົນທ້ອງຖິ່ນ ເປັນແຫຼ່ງທຶນທາງທຳມະຊາດເອກະລັກທຳມະຊາດຕິດກັບແມ່ນ້ຳຂອງ ແລະ ປະຫວັດສາດ ແລະ ວັດທະນະທຳທີ່ສຳຄັນ. ສິ່ງເຫຼົ່ານີ້ເປັນທ່າແຮງທີ່ສຳຄັນສຳລັບກິດຈະກຳການທ່ອງທ່ຽວ ເຊັ່ນ: ຍ່າງປ່າ, ແລະ ລ່ອງເຮືອ. ການດຳລົງຊີບຂອງຊຸມຊຸນທ້ອງຖິ່ນເພິ່ງພາຊັບພະຍາກອນທຳມະຊາດເພື່ອເປັນບ່ອນກະສິກຳ ເຊັ່ນ: ປູກເຂົ້າ ແລະ ພືດຜັກພັກສວນຄົວ, ຕົ້ນໄມ້ໃຫ້ໝາກ, ແລະ ລ້ຽງສັດ ເຊັ່ນ: ງົວ ແລະ ແບ້. ເປັນແຫຼ່ງອາຫານທີ່ມີຄຸນຄ່າ ທີ່ອຸດົມສົມບູນດ້ວຍເຄື່ອງປ່າຂອງດົງ.

ແຜນຍຸດທະສາດການພັດທະນາປະກອບມີການແບ່ງເຂດບູລິມະສິດດ້ານພື້ນທີ່ໃນການພັດທະນາ, ການພັດທະນາກິດຈະກຳການທ່ອງທ່ຽວ ເຊັ່ນ: ຍ່າງປ່າ, ຕັ້ງຄ້າຍ, ລ່ອງເຮືອກາຍັກ ແລະ ຂີ່ເຮືອຊົມແມ່ນ້ຳຂອງ, ສິ່ງອຳນວຍຄວາມສະດວກ ເຊັ່ນ: ທີ່ພັກ, ຮ້ານອາຫານ, ເສັ້ນທາງເຂົ້າເຖິງບ້ານ ເປັນຕົ້ນ. ມີແຜນການເງິນເພື່ອການອະນຸຮັກທຳມະຊາດຢ່າງຊັດເຈນ, ລະບຽບການເພື່ອຈັດການຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ, ສົ່ງເສີມການທ່ອງທ່ຽວດ້ວຍການໂຄສະນາຜ່ານຫຼາຍຊ່ອງທາງ, ແລະ ປະຕິບັດພາລະບົດບາດຂອງໜ່ວຍງານທີ່ກ່ຽວຂ້ອງ. ເຖິງຢ່າງໃດກໍຕາມ, ສິ່ງທ້າທາຍຂອງການພັດທະນາຄື ການຊອກຫາແຫຼ່ງທຶນສະໜັບສະໜູນການພັດທະນາ, ການດຶງດູດການລົງທຶນຈາກພາກເອກະຊົນ, ການເຊື່ອມໂຍງການອະນຸຮັກສັດປ່າ ແລະ ການທ່ອງທ່ຽວ, ການຮັກສາຄຸນຄ່າ ແລະ ຄວາມງາມຂອງຊັບພະຍາກອນທຳມະຊາດ, ແລະ ການໃຫ້ຄວາມຮ່ວມມືຂອງຊຸມຊົນໃນການຮັກສາສິ່ງແວດລ້ອມຢ່າງຈິງຈັງ.

ທ່າແຮງຂອງການພັດທະນາຕໍ່ການດຳລົງຊີບຂອງຊຸມຊົນທ້ອງຖິ່ນສະແດງອອກໃນຫຼາຍໆດ້ານປະກອບມີ ສ້າງວຽກເຮັດງານທຳ ແລະ ລາຍຮັບໄລຍະຍາວ, ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນດ້ານການເປັນຜູ້ປະກອບການຂະໜາດນ້ອຍ, ປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ, ໂອກາດໃນການພັດທະນາທັກສະ, ເພີ່ມສະຫວັດດີພາບ ແລະ ການເປັນຢູ່ທີ່ດີ, ແລະ ປັບປຸງຄຸນະພາບຊີວິດ. ຊຸມຊົນປັບຕົວໃນການອະນຸຮັກພືດ ແລະ ສັດປ່າທີ່ຫາຍາກ ແລະ ຮັກສາສະພາບແວດລ້ອມ. ການນຳໃຊ້ຊັບພະຍາກອນທຳມະຊາດທີ່ຍືນຍົງດ້ວຍກົນໄກແຈກຢາຍລາຍຮັບໃຫ້ພາກສ່ວນທີ່ກ່ຽວຂ້ອງ. ປະຕິບັດການພັດທະນາແບບຍືນຍົງໂດຍການສົ່ງເສີມການສ້າງທີ່ພັກ ແລະ ສິ່ງອຳ

ນວຍຄວາມສະດວກທີ່ເປັນມິດກັບສິ່ງແວດລ້ອມ, ແລະ ມີລະບຽບການຈັດການຂີ້ເຫຍື້ອໃນສະຖານທ່ອງທ່ຽວ ແລະ ເຂດຊຸມຊົນຢ່າງຊັດເຈນ.
**ຄຳສັບສຳຄັນ:** ການທ່ອງທ່ຽວແບບທຳມະຊາດ, ການດຳລົງຊີບແບບຍືນຍົງ, ປ່າສະຫງວນແຫ່ງຊາດ

# The Potential of Nature-Based Tourism Development to Enhance the Sustainable Livelihoods of the Local Community in Phou Xieng Thong National Protected Area Champasak Province

Khamsavay PASANCHAY, Vilaythieng SYSOUVONG, Sengdeuan OULAYSENG, Khamvone KHONEVIXUM, Phonnikone SOUKHASERM,
Faculty of Social Science, National University of Laos
E-mail: k.pasancha@nuol.edu.la

**Abstract**

This research investigates the potential of Nature-Based Tourism (NBT) development to enhance sustainable livelihoods of the local community in Phou Xieng Thong National Protected Area (PXTNPA), Champasak Province. Its key objectives are: to study the role of the protected area in NBT development and community livelihoods; to examine the development strategy and its challenges; and to assess the potential of the development for the community's sustainable livelihoods. The research employs a qualitative methodology, collecting data through in-depth interviews, observations, and relevant documents from government agencies (ministry, provincial, district levels) and community representatives from Singsamphan and Soula villages. Data was analyzed by categorization and interpretation based on relevant concepts and theories. The results of the study found that:

PXTNPA played a very important role in the development of NBT and the livelihood of local communities. It is a valuable asset due to its unique geographical location along the Mekong River, as well as its historical and cultural importance. These factors give it great potential for tourism activities such as hiking and boating. Communities' livelihood relies heavily on the natural resources offered by the PXTNPA. The area provides resources for agriculture, such as growing rice, vegetables, and fruit trees, and for raising animals like cows and goats. It is also a valuable source of food, rich in non-timber forest products (NTFPs).

The development strategy includes the division of priority areas for development, the development of tourism activities such as hiking, camping, kayaking and boating along the Mekong River, as well as facilities such as accommodations, restaurants, and access roads to villages. There are clear financial plans for nature conservation, regulations to manage environmental and social impacts, promotion of tourism through various channels, and a development plan aligned with the roles of different stakeholders. However, the challenges for this development are finding sources of funding, attracting private sector investment, integrating wildlife conservation with tourism, preserving the value and beauty of natural resources, and ensuring the active cooperation of local communities in environmental protection.

The potential for development to impact the livelihood of local communities is evident in several ways, including creating jobs and long-term income, empowering communities to become small entrepreneurs, improving infrastructure and facilities, and providing opportunities for skill development. This also increases well-being and improves the overall quality of life. Communities are adapting to conserve rare plants and animals and protect the environment. There is a sustainable use of natural resources with a revenue-sharing mechanism for stakeholders. A sustainable development practice is implemented by promoting the creation of eco-friendly accommodation and facilities, and by having clear regulations for waste management in tourist areas and communities.
**Key words:** Nature-Based Tourism, Sustainable Livelihoods, National Protected Area.

## ເຫດຜົນ ແລະ ຄວາມສຳຄັນຂອງບັນຫາ

ການທ່ອງທ່ຽວຖືໄດ້ວ່າເປັນອຸດສາຫະກຳໃໝ່ຂອງສາທາລະນະລັດ ປະຊາທິປະໄຕ ຊຸມຊົນລາວ (ສປປ ລາວ) ແລະ ໄດ້ຮັບການຍອມຮັບວ່າເປັນຂະແໜງການໜຶ່ງທີ່ສຳຄັນໃນ 6 ຂະແໜງການຂອງລາວທີ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດແຫ່ງຊາດ ແລະ ທ່າແຮງທາງດ້ານການທ່ອງທ່ຽວທີ່ອີງໃສ່ທຳມະຊາດ ແລະ ວັດທະນາທຳ ເປັນການພັດທະນາເສດຖະກິດຊົນນະບົດທີ່ດີທີ່ສຸດ (World Bank Group, 2020). ໃນປີ 2019 ສປປ ລາວ ໄດ້ຮັບນັກທ່ອງທ່ຽວຕ່າງປະເທດຫຼາຍກວ່າ 4.79 ລ້ານຄົນ, ອັດຕາການຂະຫຍາຍຕົວແມ່ນ 14.4%, ສ້າງລາຍຮັບໂດຍກົງໄດ້ຫຼາຍກວ່າ 900 ລ້ານໂດລາສະຫະລັດ. ຂະບວນການປີທ່ອງທ່ຽວລາວ-ຈີນທີ່ໄດ້ວາງອອກໃນປີ 2019 ໄດ້ຊ່ວຍຊຸກຍູ້ນັກທ່ອງທ່ຽວຈີນເຂົ້າມາຫຼາຍກວ່າ 1 ລ້ານເທື່ອ

ຄົນ ແລະ ຍ້ອນການເຊື່ອມຕໍ່ທາງລົດໄຟ ສ ປປລາວ ໄດ້ຮັບນັກທ່ອງທ່ຽວຈຳນວນຫຼາຍກວ່າເກົ່າ (United Nations, 2020). ຂະນະດຽວກັນ, ກົມພັດທະນາການທອງທຽວ ສະແດງໃຫ້ເຫັນຕົວເລກນັກທ່ອງທ່ຽວພາຍໃນປະເທດມີປະມານ 2 ລ້ານເທື່ອຄົນ, ມີລາຍຮັບປະມານ 80 ລ້ານໂດລາສະຫະລັດ. ຍ້ອນການທ່ອງທ່ຽວດຶງດູດເງິນຕາຕ່າງປະເທດເຂົ້າປະເທດການທ່ອງທ່ຽວໄດ້ກາຍເປັນການປະກອບສ່ວນຕົ້ນຕໍໃນການພັດທະນາເສດຖະກິດ ເຊິ່ງກວມເອົາ 9.1% ຂອງເສດຖະກິດແຫ່ງຊາດ (ກົມພັດທະນາການທ່ອງທ່ຽວ, 2021).

ສະພາບການທ່ອງທ່ຽວກ່ອນໂລກລະບາດໂຄວິດ-19 ຈຳນວນນັກທ່ອງທ່ຽວຕ່າງປະເທດໃນທົ່ວໂລກເພີ່ມຂຶ້ນຢ່າງຫຼວງຫຼາຍ. ໃນປີ 2019, ນັກທ່ອງທ່ຽວສາກົນກວມເອົາ 1.5 ຕື້ຄົນ ແລະ ເພີ່ມຂຶ້ນ 3% - 4% ໃນປີ 2020, ດ້ວຍລາຍຈ່າຍນັກທ່ອງທ່ຽວສາກົນແມ່ນ 1,8 ພັນຕື້ໂດລາສະຫະລັດ (6.8% ຂອງການສົ່ງອອກທັງໝົດ) (United Nations World Tourism Organization, 2020).

ນັບແຕ່ປີ 2016-2019, ການທ່ອງທ່ຽວຂອງລາວໄດ້ຮັບຜົນປະໂຫຍດຈາກຕະຫຼາດໂລກດ້ວຍທ່າອ່ຽງເພີ່ມຂຶ້ນ ເຊິ່ງໃນປີໜຶ່ງໆ ແມ່ນມີຫຼາຍກວ່າ 6 ລ້ານຄົນ. ນັກທ່ອງທ່ຽວສ່ວນຫຼາຍມາຈາກບັນດາປະເທດອາຊີ, ເຊິ່ງກວມເອົາຫຼາຍກວ່າ 2 ລ້ານຄົນພາຍໃນປີ 2017-2019. ນັກທ່ອງທ່ຽວສ່ວນໃຫຍ່ມາຈາກປະເທດໄທ, ມີຫຼາຍກວ່າໜຶ່ງລ້ານຄົນຕໍ່ປີ. ແຫຼ່ງທີ່ສອງຂອງຕະຫຼາດແມ່ນນັກທ່ອງທ່ຽວ ແມ່ນມາຈາກປະເທດຈີນ ແລະ ເກົາຫຼີ . ແຫຼ່ງຕະຫຼາດອື່ນແມ່ນນັກທ່ອງທ່ຽວຊາວເອີຣົບ ແລະ ອາເມລິກາ ປີ 2018 . ການທ່ອງທ່ຽວຂາເຂົ້າກໍ່ນຳເອົາລາຍຮັບອັນໃຫຍ່ຫຼວງມາສູ່ການທ່ອງທ່ຽວຂອງລາວ ເຊິ່ງໃນປີ 2016 ໄດ້ 724. 1 ລ້ານໂດລາສະຫະລັດ ແລະ ເພີ່ມຂຶ້ນເປັນ 934.7 ລ້ານໂດລາສະຫະລັດ ໃນປີ 2019. ໃນຈຳນວນນັກທ່ອງທ່ຽວເຫຼົ່ານີ້ ເຫັນໄດ້ວ່ານັກທ່ອງທ່ຽວທີ່ສົນໃຈ ແລະ ມີກິດຈະກຳດ້ານການທ່ອງທ່ຽວທຳມະຊາດ (Nature-Based Tourism: NBT) ຫຼື ການທ່ອງທ່ຽວອະນຸຮັກ (Ecotourism) ມີລັກສະນະເພີ່ມຂຶ້ນ ຈາກ 386,884 ຄົນ ໃນປີ 2017 ເປັນ 622,833 ຄົນ (ກົມພັດທະນາການທ່ອງທ່ຽວ, 2021).

ອີງຕາມຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຂອງ ສປປ ລາວ ເພື່ອໃຫ້ຊຸມຊົນຜູ້ທຸກຍາກທີ່ດຳລົງຊີບຢູ່ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ປະກອບສ່ວນຂະບວນການພັດທະນາ ແລະ ໄດ້ຮັບຜົນປະໂຫຍດຈາກການພັດທະນາເສດຖະກິດ-ສັງຄົມ ໃນລັກສະນະທີ່ສົມບູນແບບ ແລະ ຍຸດຕິທຳ (ກະຊວງແຜນການ ແລະ ການລົງທຶນ, 2019) . ແນ່ນອນວ່າການເນັ້ນໜັກການທ່ອງທ່ຽວແບບທຳມະຊາດທີ່ອີງໃສ່ເຂດປ່າສະຫງວນແມ່ນເປັນປັດໃຈຫຼັກຂອງການພັດທະນາການທ່ອງທຽວແບບຍືນຍົງ ແລະ ມັນກໍ່ເປັນສິ່ງທີ່ສຳຄັນເພື່ອກ້າວໄປເຖິງເປົ້າໝາຍການພັດທະນາແບບຍືນຍົງ ຫຼື Sustainable Development Goals (SDGs) ຂອງ ສປປ ລາວ ໃນປີ 2030 ນີ້ (United Nations in Lao PDR, 2023) ໂດຍສະເພາະການຫຼຸດຜ່ອນຄວາມທຸກຍາກເປັນອັນດັບຕົ້ນຕໍ ສອດຄ່ອງກັບແຜນພັດທະນາເສດຖະກິດແລະ ສັງຄົມແຫ່ງຊາດໄລຍະ 2021-2025 ຮັບຮອງເອົາຈາກກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ 9 ແຕ່ວັນທີ 22-26 ມີນາ 2021 ທີ່ຖືເອົາການແກ້ໄຂບັນຫາຄວາມທຸກຍາກເປັນໜຶ່ງໃນບຸລິມະສິດຂອງການພັດທະນາ (GPEDC, 2022).

ປ່າສະຫງວນແຫ່ງຊາດພູຊຽງທອງໄດ້ຖືກພັດທະນາເປັນແຫຼ່ງທ່ອງທ່ຽວອະນຸຮັກໂດຍຊຸມຊົນມີສ່ວນຮ່ວມ (Community-Based Ecotourism: CBET) ແຕ່ຊ່ວງປີ 2004-2006 ໂດຍໂຄງການພັດທະນາການທ່ອງທ່ຽວລຸ່ມແມ່ນ້ຳຂອງ (Mekong Tourism Development Project: MTDP) ແລະ ອີງໃສ່ທຳມະຊາດຂອງປ່າສະຫງວນເປັນຈຸດທ່ອງທ່ຽວ ແລະ ໃນປະຈຸບັນປ່າສະຫງວນແຫ່ງຊາດພູຊຽງທອງກຳລັງຈະຖືກພັດທະນາເປັນແຫຼ່ງທ່ອງທ່ຽວອະນຸຮັກຊຸມຊົນມີສ່ວນຮ່ວມຕື່ມອີກຕາມແບບມາດຕະຖານຂອງອາຊຽນ. ການຄົ້ນຄວ້າເນັ້ນໜັກການທ່ອງທ່ຽວທາງທຳມະຊາດທີ່ຕິດພັນກັບເຂດປ່າສະຫງວນແຫ່ງຊາດພູຊຽງທອງ ແລະ ໃນຄະນະດຽວກັນການດຳລົງຊີບຂອງທ້ອງຖິ່ນກໍ່ຕິດພັນກັບປ່າສະຫງວນແຫ່ງນີ້. ສະນັ້ນ, ໃນການຄົ້ນຄວ້າຄັ້ງນີ້ໄດ້ສຶກສາໃນຫົວຂໍ້: ທ່າແຮງຂອງການພັດທະນາການທ່ອງທ່ຽວທຳມະຊາດເຂດເພື່ອສົ່ງເສີມການດຳລົງຊີບແບບຍືນຍົງຂອງຊຸມຊົນທ້ອງຖິ່ນໃນເຂດປ່າສະຫງວນແຫ່ງຊາດພູຊຽງທອງ. ໂດຍມີຄຳຖາມຫຼັກຄື: ການພັດທະນາການທ່ອງທ່ຽວທຳມະຊາດປະກອບສ່ວນສົ່ງເສີມການດຳລົງຊີບແບບຍືນຍົງຂອງຊຸມຊົນທ້ອງຖິ່ນໃນເຂດປ່າສະຫງວນແຫ່ງຊາດພູຊຽງທອງແນວໃດ?.

**ຈຸດປະສົງການຄົ້ນຄວ້າ**

1) ສຶກສາບົດບາດຂອງປ່າສະຫງວນແຫ່ງຊາດພູຊຽງທອງຕໍ່ການພັດທະນາການທ່ອງທ່ຽວທາງທຳມະຊາດ ແລະ ການດຳລົງຊີບຂອງຊຸມຊົນທ້ອງຖິ່ນ

2) ສຶກສາແຜນຍຸດທະສາດການພັດທະນາຂອງການພັດທະນາການທ່ອງທ່ຽວທຳມະຊາດປ່າສະຫງວນແຫ່ງຊາດພູຊຽງທອງ ແລະ ສິ່ງທ້າທາຍຂອງການພັດທະນາການທ່ອງທ່ຽວ

3) ປະເມີນທ່າແຮງຂອງການພັດທະນາການທ່ອງທ່ຽວທຳມະຊາດຕໍ່ການດຳລົງຊີບແບບຍືນຍົງຂອງຊຸມຊົນທ້ອງຖິ່ນໃນເຂດປ່າສະຫງວນແຫ່ງຊາດພູຊຽງທອງ

## ແນວຄິດ, ທິດສະດີ ແລະ ການວິໄຈທີ່ກ່ຽວຂ້ອງ

### ແນວຄວາມຄິດການພັດທະນາແຫຼ່ງທ່ອງທ່ຽວ

ການພັດທະນາທ່ອງທ່ຽວເພື່ອສາມາດດຶງດູດນັກທ່ອງທ່ຽວໄດ້ນັ້ນແມ່ນຈະຕ້ອງຄຳນຶງເຖິງຈຸດສຳຄັນທາງດ້ານສະພາບແວດລ້ອມທາງທຳມະຊາດທັງແງ່ຂອງກາຍຍະພາບ ແລະ ພູມີພາກຕຳແໜ່ງທີ່ຕັ້ງ, ຄວາມສາມາດທີ່ຈະຮອງຮັບນັກທ່ອງທ່ຽວຂອງພື້ນທີ່ໃນສະຖານທີ່ນັ້ນ, ຄວາມສາມາດໃນການໃຊ້ບໍລິການຂອງນັກທ່ອງທ່ຽວ, ຄວາມສະດວກໃນການເດີນທາງ, ເສັ້ນທາງເຂົ້າເຖິງ ແລະ ຊື່ສຽງຂອງສະຖານທີ່ທ່ອງທ່ຽວທີ່ກະຈາຍສູ່ໂລກພາຍນອກ. ການພັດທະນາເພື່ອໃຫ້ປະສົບຜົນສຳເລັດ ກໍຕ້ອງອະນຸຮັກຊັບພະຍາກອນໄປພ້ອມໆກັນ ເຊິ່ງປະກອບດ້ວຍ ການສ້າງຈິດສຳນຶກໃນການອະນຸຮັກ, ສ້າງຄວາມພໍໃຈໃຫ້ນັກທ່ອງທ່ຽວ, ແລະ ການສ້າງຜົນປະໂຫຍດໃຫ້ຊຸມຊົນ (ນິຄົມ ຈາຣຸມະນີ , 1993). ແນວຄິດອົງປະກອບຂອງແຫຼ່ງທ່ອງທ່ຽວທີ່ເນັ້ນວ່າ ສະຖານທີ່ທ່ອງທ່ຽວຈະສາມາດສົ່ງເສີມ ແລະ ພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວທີ່ອຸດົມສົມບູນໄດ້ຕ້ອງມີອົງປະກອບທີ່ສຳຄັນຢ່າງໜ້ອຍ 5 ອົງປະກອບ ຫຼື 5As ເຊິ່ງປະກອບມີດັ່ງນີ້: ສິ່ງດຶງດູດ ໃຈ, ການເຂົ້າເຖິງ, ກິດຈະກຳ, ສິ່ງອຳນວຍຄວາມສະດວກພື້ນຖານໂຄງລ່າງ, ແລະ ສິ່ງອຳນວຍຄວາມສະດວກຂອງສະພື້ນທີ່ໃຫ້ບໍລິການດ້ານອື່ນໆ (ພະຍອມ ທຳມະບຸດ, 2006 ).

### ແນວຄວາມຄິດການພັດທະນາການທ່ອງທ່ຽວແບບຍືນຍົງ

ອົງປະກອບຫຼັກຂອງການພັດທະນາການທ່ອງທ່ຽວແບບຍືນຍົງປະກອບມີ 6 ດ້ານດັ່ງຕໍ່ໄປນີ້: ຊັບພະຍາກອນການທ່ອງທ່ຽວ ສິ່ງແວດລ້ອມໃນແຫຼ່ງທ່ອງທ່ຽວ, ທຸລະກິດໃນແຫຼ່ງທ່ອງທ່ຽວ, ການຕະຫຼາດທ່ອງທ່ຽວ, ການມີສ່ວນຮ່ວມຂອງຊຸມຊົນທ້ອງຖິ່ນ, ປູກຈິດສຳນຶກຂອງການທ່ອງທ່ຽວແບບອະນຸຮັກ (ບຸນເລີດ ຈິດຕັ້ງວັດທະນາ, 2005). ການພັດທະນາການທ່ອງທ່ຽວແບບຍືນຍົງປະກອບ: ການພັດທະນາໃນລະດັບທ້ອງຖິ່ນ ແລະ ລະດັບພູມມີສາດ, ການມີສ່ວນຮ່ວມຂອງຄົນໃນທ້ອງຖິ່ນ, ຂອບເຂດທີ່ເໝາະສົມຂອງການພັດທະນາ, ການໃຊ້ວັດສະດຸ ແລະ ຜົນຜະລິດຈາກທ້ອງຖິ່ນ, ການກະຈາຍລາຍໄດ້ໃຫ້ໄດ້ຫຼາຍທີ່ສຸດເພື່ອປະໂຫຍດໄລຍະຍາວຂອງຊຸມຊົນ, ແລະ ການຈ້າງງານຄົນໃນທ້ອງຖິ່ນ (ສາຄອນ ກໍຈະເລີນ, 2007).

### ທິດສະດີກອບການດຳລົງຊີບແບບຍືນຍົງ

ກອບການດຳລົງຊີບແບບຍືນຍົງ ສະເໜີໂດຍ Scoones ປະກອບດ້ວຍ 5 ອົງປະກອບລວມມີ: ສະຖານະການ ຫຼື ບໍລິບົດ, ຕົ້ນທຶນການດຳລົງຊີບ, ຂະບວນການຫັນປ່ຽນ, ຍຸດທະສາດການດຳລົງຊີບ, ແລະ ຜົນໄດ້ຮັບການດຳລົງຊີບແບບຍືນຍົງ. ຍຸດທະສາດການດຳລົງຊີບເປັນສອງປະເພດ: ກິດຈະກຳອີງໃສ່ຊັບພະຍາກອນທຳມະຊາດ ເຊັ່ນ: ເກັບຜະລິດຕະພັນຈາກປ່າ ແລະ ກິດຈະກຳທີ່ເປັນກະສິກຳ, ແລະ ກິດຈະກຳທີ່ບໍ່ແມ່ນກະສິກຳ ເຊັ່ນ: ການຄ້າຂາຍ ແລະ ອື່ນໆ. ຜົນໄດ້ຮັບການດຳລົງຊີບແບບຍືນຍົງຈະບັນລຸໄດ້ໃນລະດັບໃດນັ້ນແມ່ນຂຶ້ນກັບຍຸດທະສາດການດຳລົງຊີບ ໄດ້ສະເໜີ 5 ຕົວຊີ້ວັດມີດັ່ງນີ້: ຈຳນວນມື້ເຮັດວຽກທີ່ເພີ່ມຂຶ້ນທີ່ສ້າງລາຍຮັບ; ການເປັນຢູ່ທີ່ດີ; ການປັບຕົວດຳລົງຊີບ ຫຼື ການຮັບມືກັບການປ່ຽນແປງ; ແລະ ຄວາມຍືນຍົງຂອງຊັບພະຍາກອນທຳມະຊາດ (Scoones, 1998).

### ການວິໄຈທີ່ກ່ຽວຂ້ອງ

ວິໄຊ ເພຍໄຊ (2012 ) ໄດ້ສຶກສາເລື່ອງຄວາມເປັນໄປໄດ້ໃນການພັດທະນາແຫຼ່ງທ່ອງທ່ຽວອະນຸຮັກທຳມະຊາດແກ້ງເສືອເຕັ້ນ, ບ້ານປຸ່ງປ່າຕ່າວ, ເມືອງຄຳເກີດ, ແຂວງບໍລິຄຳໄຊ ສປປລາວ. ຜົນການສຶກສາສະຫຼຸບວ່າ ການພັດທະນາການທ່ອງທ່ຽວແບບອະນຸຮັກ ແລະ ຍືນຍົງ ຕ້ອງອີງໃສ່ຄວາມພ້ອມຂອງຊັບພະຍາກອນທຳມະຊາດທີ່ໂດດເດັ່ນ ເພື່ອສ້າງກິດຈະກຳການທ່ອງທ່ຽວທີ່ຫຼາກຫຼາຍ ແລະ ດຶງດູດໃຈ, ຄວບຄູ່ໄປກັບການວາງແຜນການຄຸ້ມຄອງທີ່ຄຳນຶງເຖິງປັດໃຈຮອບດ້ານ ທັງດ້ານເສດຖະກິດ, ສັງຄົມ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ໂດຍຫົວໃຈສຳຄັນຄືການສົ່ງເສີມໃຫ້ຊຸມຊົນທ້ອງຖິ່ນມີສ່ວນຮ່ວມໃນການບໍລິຫານຈັດການ ເພື່ອໃຫ້ເກີດການກະຈາຍຜົນປະໂຫຍດຢ່າງຍຸດຕິທຳ ແລະ ສາມາດຮັກສາວິຖີຊີວິດແບບດັ້ງເດີມໄວ້ໄດ້ຢ່າງຍືນຍົງ.

Anggraini ແລະ Gunawan (2021)ໄດ້ສຶກສາເລື່ອງການພັດທະນາການທ່ອງທ່ຽວອະນຸຮັກທຳມະຊາດໃນເຂດປ່າສະຫງວນ ແລະ ການຄຸ້ມຄອງປ່າໄມ້ໃນຊຸມຊົນອ້ອມຂ້າງເຂດປ່າສະຫງວນແຫ່ງຊາດ ປະເທດອິນໂດເນເຊຍ ພົບວ່າ ການທ່ອງທ່ຽວອະນຸຮັກມີບົດບາດໃນການຄຸ້ມຄອງປ່າໄມ້ ໂດຍການປັບປຸງການຄຸ້ມຄອງປ່າໄມ້ ແລະ ການຮັກສາຊີວະນາໆພັນລວມທັງການປົກປັກຮັກສາຊະນິດພັນທີ່ໃກ້ຈະສູນພັນ ແລະ ທີ່ຢູ່ອາໄສຂອງພວກມັນ. ພ້ອມກັນນັ້ນ, ການທ່ອງທ່ຽວອະນຸຮັກຍັງສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນທ້ອງຖິ່ນ, ສະໜອງຜົນປະໂຫຍດດ້ານເສດຖະກິດໂດຍກົງ ແລະ ທາງອ້ອມ. ເຖິງຢ່າງໃດກໍ່ຕາມ, ການວາງແຜນການຄຸ້ມຄອງແບບຄົບວົງຈອນ

ແມ່ນມີຄວາມຈຳເປັນເພື່ອຫຼຸດຜ່ອນຜົນກະທົບຕໍ່ການທ່ອງທ່ຽວອະນຸຮັກ ເຊັ່ນ: ພຶດຕິກຳຂອງສັດປ່າ ແລະ ການປ່ຽນແປງທາງດ້ານສະລີລະວິທະຍາ.

Das (2021) ໄດ້ສຶກສາເລື່ອງການທ່ອງທ່ຽວແບບອະນຸຮັກທຳມະຊາດຕໍ່ວິທີການຮັກສາຊີວິດການເປັນຢູ່, ການຄຸ້ມຄອງສັດປ່າ ແລະ ການອະນຸລັກຊີວະນາໆພັນ: ກໍລະນີສຶກສາປ່າສະຫງວນແຫ່ງຊາດ ນາມິລີ ປະເທດອິນເດຍ. ຜົນປະໂຫຍດໃຫ້ແກ່ປະຊາຊົນທ້ອງຖິ່ນໃນດ້ານລາຍຮັບ, ການປັບປຸງພື້ນຖານໂຄງລ່າງ, ສ້າງໂອກາດການເຮັດ, ດ້ານຊັບພະຍາກອນໄດ້ປັບປຸງຂຶ້ນໂດຍການສະໜັບສະໜູນຈາກອົງການພັດທະນາພ້ອມກັບສິ່ງອຳນວຍຄວາມສະດວກສະໜອງໃຫ້ໂດຍອົງການຈັດຕັ້ງ. ພື້ນຖານການດຳລົງຊີວິດທີ່ຂະຫຍາຍອອກ ແລະ ມາດຕະການຄຸ້ມຄອງຊີວະນາໆພັນແບບຍືນຍົງ ແມ່ນການຫຼຸດຜ່ອນຄວາມສ່ຽງດ້ານຊັບພະຍາກອນ ແລະ ຄວາມຂັດແຍ້ງລະຫວ່າງມະນຸດ ແລະ ສັດ.

Tefera (2014) ສຶກສາການທ່ອງທ່ຽວເພື່ອການດຳລົງຊີວິດແບບຍືນຍົງໃນເຂດປ່າສະຫງວນ: ກໍລະນີສຶກສາ ອຸທະຍານແຫ່ງຊາດແນຊຊາ, ປະເທດເອທິໂອປີ ຊີ້ໃຫ້ເຫັນວ່າຜົນປະໂຫຍດຂອງການທ່ອງທ່ຽວກັບຊຸມຊົນທ້ອງຖິ່ນ ເຮັດໃຫ້ຊຸມຊົນຊົນນະບົດຫຼຸດຜ່ອນກິດຈະກຳການດຳລົງຊີວິດແບບດັ້ງເດີມຂອງພວກເຂົາທີ່ນຳໃຊ້ຊັບພະຍາກອນສວນສາທາລະນະທີ່ບໍ່ຍືນຍົງ ເຊັ່ນ: ການທຳລາຍປ່າໄມ້ ແລະ ການຕັ້ງຖິ່ນຖານຢູ່ໃນສວນສາທາລະນະທີ່ຂະຫຍາຍເກີນຂອບເຂດ.

Koki (2017) ສຶກສາການທ່ອງທ່ຽວແບບອະນຸຮັກທຳມະຊາດຕໍ່ການດຳລົງຊີວິດແບບຍືນຍົງຂອງຊຸມຊົນທີ່ອາໄສຢູ່ເກາະວາສິນີ, ເມືອງຄວາເລ, ເຄນຢາ. ຜົນການສຶກສາພົບວ່າການທ່ອງທ່ຽວອະນຸຮັກ ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງເຂົ້າໃນການສ້າງວຽກເຮັດງານທຳ ແລະ ການສ້າງຄວາມເຂັ້ມແຂງດ້ານການເງິນໃຫ້ແກ່ຊຸມຊົນທ້ອງຖິ່ນ. ໄດ້ປະກອບສ່ວນເຂົ້າໃນການພັດທະນາທາງດ້ານມະນຸດທີ່ເປັນເຈົ້າຂອງໂດຍຊຸມຊົນທ້ອງຖິ່ນ.

## ວິທີດຳເນີນການວິໄຈ

ການຄົ້ນຄວ້າຄັ້ງນີ້ໃຊ້ວິທີການຄົ້ນຄວ້າແບບຄຸນນະພາບ, ເຄື່ອງມືເກັບກຳຂໍ້ມູນແບບສຳພາດແບບເຈາະເລິກ ແລະ ສັງເກດພື້ນທີ່ຕົວຈິງ ໂດຍສຳພາດກຸ່ມຕົວຢ່າງ 20 ທ່ານ ແລະ ນຳໃຊ້ການວິເຄາະຂໍ້ມູນແບບພັນລະນາ ຮ່ວມກັບແນວຄິດ ແລະ ທິດສະດີເພື່ອນຳໄປສູ່ການອະທິບາຍໃນລັກສະນະທີ່ເປັນເຫດເປັນຜົນຕໍ່ສະພາບຄວາມເປັນຈິງຂອງຂໍ້ມູນໃຫ້ຫຼາຍທີ່ສຸດ.

## ຜົນຂອງການວິໄຈ ແລະ ອະພິປາຍຜົນ

### ບົດບາດຂອງປ່າສະຫງວນແຫ່ງຊາດພູຊຽງທອງຕໍ່ ການພັດທະນາການທ່ອງທ່ຽວທຳມະຊາດ ແລະ ການດຳລົງຊີບຂອງຊຸມຊົນທ້ອງຖິ່ນ

### ບົດບາດຕໍ່ການພັດທະນາການທ່ອງທ່ຽວ

ຜົນການຄົ້ນຄວ້າພົບວ່າ ປ່າສະຫງວນແຫ່ງຊາດພູຊຽງທອງມີບົດບາດສຳຄັນຕໍ່ການທ່ອງທ່ຽວທຳມະຊາດ ເປັນແຫຼ່ງລວມຂອງຊັບພະຍາກອນທຳມະຊາດ, ປະຫວັດສາດ, ແລະວັດທະນະທຳອັນລ້ຳຄ່າ, ເຊິ່ງມີທ່າແຮງສູງໃນການພັດທະນາການທ່ອງທ່ຽວທຳມະຊາດ. ພື້ນທີ່ນີ້ໂດດເດັ່ນດ້ວຍລັກສະນະທໍລະນີສາດທີ່ເປັນເອກະລັກ ເຊັ່ນ: ພະລານຫີນດານ, ຫີນໂງ່ນຮູບຮ່າງຕ່າງໆ, ແລະ ພູມສັນຖານແມ່ນ້ຳຂອງທີ່ສວຍງາມ ເຊິ່ງເປັນຊາຍແດນກັບປະເທດໄທ. ນອກຈາກນີ້, ຍັງມີສະຖານທີ່ທາງປະຫວັດສາດອັນຍາວນານ, ອາດເຊື່ອມໂຍງກັບຜາແຕ້ມຂອງໄທ, ພ້ອມທັງມີສະຖານທີ່ສາດສະໜາທີ່ສັກສິດ ແລະ ວິຖີຊີວິດອັນເປັນເອກະລັກຂອງຊຸມຊົນທ້ອງຖິ່ນ. ປ່າສະຫງວນຍັງເປັນແຫຼ່ງອະນຸຮັກຊີວະນາໆພັນທີ່ອຸດົມສົມບູນ, ມີປ່າໄມ້ຫຼາກຫຼາຍຊະນິດ (ປ່າເຄິ່ງດົງດິບ, ປ່າໄມ້ປະສົມ), ແລະ ສັດປ່ານາໆຊະນິດລວມທັງສັດທີ່ຫາຍາກບາງຊະນິດ. ຊັບພະຍາກອນເຫຼົ່ານີ້ສົ່ງເສີມກິດຈະກຳນັນທະນາການ ຫຼາຍຢ່າງ ເຊັ່ນ: ການຍ່າງປ່າ, ການລ່ອງເຮືອຄາຍັກ, ແລະ ການຂີ່ເຮືອ. ຜົນການສຶກສານີ້ສອດຄ່ອງກັບຜົນການສຶກສາຂອງ ວິໄຊ ເພຍໄຊ (2012 ) ທີ່ພົບວ່າແຫຼ່ງທຶນທາງທຳມະຊາດສ້າງຄວາມພ້ອມດ້ານກິດຈະກຳຂອງແຫຼ່ງທ່ອງທ່ຽວທຳມະຊາດ ກິດຈະກຳເຫຼົ່ານີ້ຊ່ວຍໃຫ້ນັກທ່ອງທ່ຽວໄດ້ຊົມຄວາມງາມທຳມະຊາດ.

### ບົດບາດຕໍ່ການດຳລົງຊີບຂອງຊຸມຊົນທ້ອງຖິ່ນ

ຜົນການຄົ້ນຄວ້າສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ປ່າສະຫງວນແຫ່ງຊາດພູຊຽງທອງມີບົດບາດສຳຄັນຢ່າງຍິ່ງຕໍ່ການດຳລົງຊີບຂອງຊຸມຊົນທ້ອງຖິ່ນ ທີ່ອາໄສຢູ່ໃນເຂດ ເຊັ່ນ: ບ້ານສິງສຳພັນ ແລະ ບ້ານສຸລະ ເມືອງຊະນະສົມບູນ. ປ່າສະຫງວນແຫ່ງນີ້ເປັນ ແຫຼ່ງທີ່ດິນກະສິກຳ ແລະ ລ້ຽງສັດ ຕາມລຽບແຄມແມ່ນ້ຳຂອງທີ່ເໝາະສົມສຳລັບປູກພືດຜັກ, ຕົ້ນໄມ້ໃຫ້ໝາກ, ລ້ຽງງົວ ແລະ ແບ້. ນອກຈາກນັ້ນ, ມັນຍັງເປັນ ແຫຼ່ງສະໜອງອາຫານປະເພດເຄື່ອງປ່າຂອງດົງ ເຊັ່ນ: ພືດຜັກ, ໜໍ່, ເຫັດ, ແລະ ຊີ້ນສັດປ່າ, ພ້ອມທັງສະໜອງ ໄມ້ສຳລັບປຸກສ້າງທີ່ຢູ່ອາໄສເຊິ່ງສອດຄ່ອງກັບ Scoones (1998) ໄດ້ສະເໜີກອບການດຳລົງຊີບແບບຍືນຍົງທີ່ເນັ້ນເຖິງຄວາມສຳຄັນຂອງ ທຶນດ້ານທຳມະຊາດ ຕໍ່ການດຳລົງຊີບຂອງຊຸມຊົນທີ່ເພິ່ງພາຊັບພະຍາກອນທຳມະຊາດ ເຊັ່ນ: ການປູກຝັງ, ແລະ ການກະສິກຳ.

**ແຜນຍຸດທະສາດການພັດທະນາການທ່ອງທ່ຽວປ່າສະຫງວນແຫ່ງຊາດພູຊຽງທອງ ແລະ ສິ່ງທ້າທາຍຂອງການພັດທະນາການທ່ອງທ່ຽວ**

**ແຜນຍຸດທະສາດການພັດທະນາການທ່ອງທ່ຽວ**

ຜົນການຄົ້ນຄວ້າພົບວ່າ ແຜນຍຸດທະສາດການພັດທະນາການທ່ອງທ່ຽວ ດ້ານພື້ນທີ່ (ກຳນົດເຂດ ແລະ ແບ່ງບຸລິມະສິດເມືອງຊະນະສົມບູນ, ລະຄອນເພັງ, ຄົງເຊໂດນ) ຢ່າງຊັດເຈນ. ແຜນພັດທະນາດ້ານກິດຈະກຳແມ່ນຈະລວມເອົາສິ່ງດຶງດູດທຳມະຊາດ, ວັດທະນະທຳ, ປະຫວັດສາດ, ແລະ ວິຖີຊີວິດຊຸມຊົນ (ຍ່າງປ່າ, ຕັ້ງຄ້າຍ, ລ່ອງເຮືອ), ສິ່ງອຳນວຍຄວາມສະດວກ (ທີ່ພັກເປັນມິດສິ່ງແວດລ້ອມ, ໂຮມສະເຕ, ຮ້ານອາຫານ, ຫ້ອງການນຳທ່ຽວ, ການປັບປຸງທາງຍ່າງ ແລະ ເສັ້ນທາງເຂົ້າເຖິງ) ເຊິ່ງສອດຄ່ອງກັບ ພະຍອມ ທຳມະບຸດ (2006 )ໄດ້ໃຫ້ແນວຄິດອົງປະກອບຂອງແຫຼ່ງທ່ອງທ່ຽວທີ່ເນັ້ນວ່າ ສະຖານທີ່ທ່ອງທ່ຽວຈະສາມາດສົ່ງເສີມ ແລະ ພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວທີ່ອຸດົມສົມບູນໄດ້ຕ້ອງມີການພັດທະນາ ສິ່ງດຶງດູດໃຈ, ການເຂົ້າເຖິງ, ກິດຈະກຳ, ສິ່ງອຳນວຍຄວາມສະດວກພື້ນຖານໂຄງລ່າງ, ແລະ ສິ່ງອຳນວຍຄວາມສະດວກຂອງສະພື້ນທີ ແລະ ດ້ານອື່ນໆ. ການແຈກຢາຍຜົນປະໂຫຍດໃຫ້ຊຸມຊົນ ແລະ ໜ່ວຍງານລັດທີ່ກ່ຽວຂ້ອງ ເພື່ອສະໜັບສະໜູນການຄຸ້ມຄອງ ແລະ ປົກປັກຮັກສາ , ແລະ ການຈັດການຜົນກະທົບຕໍ່ສິ່ງແວດລ້ອມ ຜ່ານການກຳນົດລະບຽບ ແລະ ສັງຄົມໂດຍການສື່ສານໃຫ້ນັກທ່ອງທ່ຽວເຂົ້າໃຈວັດທະນະທຳທ້ອງຖິ່ນ ແມ່ນລວມໃນແຜນການພັດທະນາສອດຄ່ອງກັບ ສາຄອນ ກີ່ຈະເລີນ (2007) ໄດ້ໃຫ້ແນວຄິດການກະຈາຍລາຍໄດ້ເຂົ້າສູ່ທ້ອງຖິ່ນເພື່ອປະໂຫຍດຍືນຍົງຂອງຊຸມຊົນ ແລະ ການມີສ່ວນຮ່ວມຂອງຊຸມຊົນ. ດ້ານການຕະຫຼາດ, ແຜນຍຸດທະສາດສຸມໃສ່ນັກທ່ອງທ່ຽວທ້ອງຖິ່ນ, ນັກທ່ອງທ່ຽວໄທ, ແບັກແພັກເກີ້ສາກົນ, ແລະ ບໍລິສັດທ່ອງທ່ຽວ, ໂຄສະນາຜ່ານຫຼາຍຊ່ອງທາງ ເຊັ່ນ: ອອນລາຍ/ສິ່ງພິມ. ແຜນຍຸດທະສາດລະບຸຄວາມຮັບຜິດຊອບຮ່ວມກັນຂອງພາກລັດ ແລະ ເອກະຊົນ (ລວມທັງຊຸມຊົນທ້ອງຖິ່ນ ແລະ ພະແນກທ່ອງທ່ຽວຕ່າງໆ) ໂດຍມີການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາ, ບໍລິຫານ, ແລະ ແບ່ງປັນຜົນປະໂຫຍດ ເຊິ່ງສອດຄ່ອງກັບ ບຸນເລີດ ຈິດຕັ້ງວັດທະນາ (2005) ແນວຄິດການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນຈັດການທ່ອງທ່ຽວດ້ວຍຕົນເອງ ແລະ ມີສ່ວນຮ່ວມໃນການຕັດສິນໃຈ ທີ່ເນັ້ນຄວາມຮັບຜິດຊອບ ແລະ ສະໜັບສະໜູນຊຸມຊົນ.

**ສິ່ງທ້າທາຍຂອງການພັດທະນາການທ່ອງທ່ຽວ**

ຜົນການສຶກສາໄດ້ເປີດເຜີຍວ່າ ສິ່ງທ້າທາຍສຳຄັນໃນການພັດທະນາການທ່ອງທ່ຽວປ່າສະຫງວນແຫ່ງຊາດພູຊຽງທອງ ລວມມີ: ການຊອກຫາແຫຼ່ງທຶນ, ການສຶກສາຄົ້ນຄວ້າຂໍ້ມູນ, ການດຶງດູດການລົງທຶນຈາກພາກເອກະຊົນ, ການເຊື່ອມໂຍງການທ່ອງທ່ຽວກັບການອະນຸຮັກສັດປ່າ, ການຮັກສາຄຸນຄ່າ ແລະ ຄວາມງາມຂອງແຫຼ່ງທ່ອງທ່ຽວທຳມະຊາດ, ແລະ ການສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນໃນການຮັກສາສິ່ງແວດລ້ອມ ເຊິ່ງສອດຄ່ອງກັບ ນິຄົມ ຈາຣຸມະນີ (1993) ທີ່ກ່າວວ່າການພັດທະນາການທ່ອງທ່ຽວຕ້ອງຄຳນຶງເຖິງສະພາບແວດລ້ອມທຳມະຊາດ ແລະ ພູມີພາກທີ່ຕັ້ງ, ລວມທັງເສັ້ນທາງເຂົ້າເຖິງ, ຄວາມສະດວກໃນການເດີນທາງ, ຄວາມສາມາດໃນການໃຊ້ບໍລິການຂອງນັກທ່ອງທ່ຽວ, ແລະ ຊື່ສຽງຂອງແຫຼ່ງທ່ອງທ່ຽວທີ່ກະຈາຍສູ່ໂລກພາຍນອກ.

**ທ່າແຮງຂອງການພັດທະນາການທ່ອງທ່ຽວປ່າສະຫງວນແຫ່ງຊາດພູຊຽງທອງຕໍ່ການດຳລົງຊີບແບບຍືນຍົງຂອງຊຸມຊົນທ້ອງຖິ່ນ**

**ການສ້າງອາຊີບ ແລະ ລາຍຮັບ**

ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນຢູ່ປ່າສະຫງວນແຫ່ງຊາດພູຊຽງທອງ ແມ່ນເນັ້ນໜັກໃສ່ການສົ່ງເສີມຄວາມເປັນຜູ້ປະກອບການຂະໜາດນ້ອຍ, ການປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ, ການພັດທະນາດ້ານທັກສະ, ແລະ ການອະນຸຮັກວັດທະນະທຳ. ການບໍລິການເຮືອນພັກແບບໂຮມສະເຕຢູ່ບ້ານສີງສຳພັນເປັນຕົວຢ່າງໜຶ່ງຂອງການປະກອບການຂະໜາດນ້ອຍທີ່ສ້າງລາຍໄດ້ເສີມ, ແລະ ແຜນພັດທະນາໃນອະນາຄົດກໍມີເປົ້າໝາຍສ້າງໂອກາດໃຫ້ແກ່ທຸລະກິດທີ່ຊຸມຊົນເປັນເຈົ້າຂອງ ເຊັ່ນ: ເຮືອນພັກ ເຊິ່ງສອດຄ່ອງກັບ ນິຄົມ ຈາຣຸມະນີ (1993) ໄດ້ໃຫ້ແນວຄິດກ່ຽວກັບການພັດທະນາການທ່ອງທ່ຽວທີ່ຕ້ອງຄຳນຶງເຖິງການສ້າງຜົນປະໂຫຍດໃຫ້ຊຸມຊົນ. ນອກຈາກນີ້, ຍັງສອດຄ່ອງກັບຜົນການສຶກສາຂອງ Tefera (2014) ພົບວ່າການພັດທະນາການທ່ອງທ່ຽວປ່າສະຫງວນສ້າງຜົນປະໂຫຍດດ້ານການຈ້າງງານ ແລະ ລາຍໄດ້ໃຫ້ຊຸມຊົນທີ່ຢູ່ໃນ ແລະ ອ້ອມເຂດປ່າສະຫງວນ, ແລະ ສອດຄ່ອງກັບຜົນການສຶກສາຂອງ Das (2021) ພົບວ່າການທ່ອງທ່ຽວແບບທຳມະຊາດເປັນວິທີຊ່ວຍການປັບປຸງພື້ນຖານໂຄງລ່າງ, ການພັດທະນາເສັ້ນທາງເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ, ການພັດທະນາທັກສະການນຳທ່ຽວ, ການຕ້ອນຮັບ, ຊ່ວຍເພີ່ມຄຸນນະພາບຊີວິດ ແລະ ຄວາມພາກພູມໃຈຂອງຊຸມຊົນ, ອະນຸຮັກວັດທະນະທຳຮີດຄອງປະເພນີ, ຫັດຖະກຳ

ທ້ອງຖິ່ນ, ຊ່ວຍສ້າງຄວາມເຂັ້ມແຂງໃຫ້ຊຸມຊົນທ້ອງຖິ່ນ ແລະ ສະໜອງຜົນປະໂຫຍດທາງເສດຖະກິດທັງທາງກົງ ແລະ ທາງອ້ອມ.

**ສະຫວັດດີພາບ ຫຼື ການເປັນຢູ່ທີ່ດີ**

ນອກເໜືອຈາກຜົນປະໂຫຍດທາງເສດຖະກິດທີ່ເຫັນໄດ້ຊັດເຈນ, ການສຶກສາຍັງພົບວ່າການທ່ອງທ່ຽວມີຜົນປະໂຫຍດທາງດ້ານ ຈິດໃຈ ແລະ ສະຫວັດດີພາບ ຕໍ່ຜູ້ໃຫ້ບໍລິການ ແລະ ຜູ້ເຂົ້າຮ່ວມໃນບ້ານສິງສຳພັນ. ສິ່ງເຫຼົ່ານີ້ສະແດງອອກຜ່ານ ຄວາມພາກພູມໃຈ ໃນວຽກງານທີ່ເພີ່ມຂຶ້ນ, ເຊິ່ງສົ່ງຜົນດີຕໍ່ສຸຂະພາບຈິດໃຈ ແລະ ຮ່າງກາຍ. ນອກຈາກນັ້ນ, ຍັງເກີດມີ ຄວາມຮູ້ສຶກຄວາມເປັນສ່ວນໜຶ່ງຂອງຊຸມຊົນ ເນື່ອງຈາກການພົວພັນລະຫວ່າງຊຸມຊົນເພີ່ມຂຶ້ນ, ເຮັດໃຫ້ຊຸມຊົນມີຄວາມສະໜິດສະໜົມກັນຫຼາຍຂຶ້ນ. ຜົນປະໂຫຍດທາງດ້ານຈິດໃຈເຫຼົ່ານີ້ສອດຄ່ອງກັບທິດສະດີຂອບເຂດການດຳລົງຊີບແບບຍືນຍົງຂອງ Scoones (1998) ທີ່ວ່າສະຫວັດດີພາບລວມອົງປະກອບສຳຄັນເຊັ່ນ: ຄວາມນັບຖືຕົນເອງ, ຄວາມໝັ້ນຄົງ, ແລະ ຄວາມສຸກ. ການພັດທະນາການທ່ອງທ່ຽວຍັງປະກອບສ່ວນ ປັບປຸງຄຸນນະພາບຊີວິດ ຂອງຊຸມຊົນ. ສິ່ງນີ້ຍັງສອດຄ່ອງກັບຜົນການສຶກສາຂອງ Stone (2015) ທີ່ສະແດງໃຫ້ເຫັນວ່າການທ່ອງທ່ຽວອະນຸຮັກເປັນວິທີການໜຶ່ງໃນການສ້າງຄວາມຍືນຍົງດ້ານຊີວິດການເປັນຢູ່ ແລະ ປັບປຸງພື້ນຖານການດຳລົງຊີວິດຂອງປະຊາຊົນທ້ອງຖິ່ນ.

**ການປັບຕົວຂອງຊຸມຊົນ**

ຜົນການສຶກສາຊີ້ໃຫ້ເຫັນວ່າ ຊຸມຊົນທ້ອງຖິ່ນໄດ້ມີການປັບຕົວ ໂດຍການປ່ຽນແປງການປະຕິບັດແບບດັ້ງເດີມຂອງຕົນ, ໂດຍສະເພາະຊຸມຊົນທີ່ມີສ່ວນຮ່ວມໃນການທ່ອງທ່ຽວໄດ້ເລີ່ມຕົ້ນຂໍ້ລິເລີ່ມເພື່ອ ປົກປັກຮັກສາຊັບພະຍາກອນທຳມະຊາດ. ການປັບຕົວນີ້ສອດຄ່ອງກັບການສຶກສາຂອງ Das (2021) ທີ່ພົບວ່າການສະໜັບສະໜູນຈາກອົງການພັດທະນາຊ່ວຍເພີ່ມຄວາມສາມາດຂອງຊຸມຊົນໃນການແກ້ໄຂຂໍ້ຂັດແຍ່ງດ້ານຊັບພະຍາກອນ ແລະ ຫຼຸດຜ່ອນຄວາມສ່ຽງຂອງຄວາມຂັດແຍ່ງລະຫວ່າງຄົນກັບສັດ. ນອກຈາກນັ້ນ, ຍັງສອດຄ່ອງກັບ Anggraini ແລະ Gunawan (2021) ທີ່ພົບວ່າການພັດທະນາການທ່ອງທ່ຽວໄດ້ເຮັດໃຫ້ກິດຈະກຳດຳລົງຊີບແບບດັ້ງເດີມເຊັ່ນ: ການລ່າສັດ, ການປູກພືດ, ແລະ ການລ່າສັດຫຼຸດລົງ, ພ້ອມທັງປັບປຸງການປະຕິບັດສຸຂະອະນາໄມ ແລະ ສຸມໃສ່ຄວາມສະອາດສິ່ງແວດລ້ອມ. ການປ່ຽນແປງເຫຼົ່ານີ້ສະທ້ອນເຖິງ ການປັບຕົວຂອງການດຳລົງຊີບ ເຊິ່ງສອດຄ່ອງກັບ Scoones (1998) ກອບການດຳລົງຊີບແບບຍືນຍົງ ເຊິ່ງຄວາມສາມາດໃນການຮັບມື ແລະ ຟື້ນຕົວຈາກຄວາມກົດດັນ ແລະ ການປ່ຽນແປງຊີ້ໃຫ້ເຫັນວ່າການປັບຕົວແມ່ນກຸນແຈສຳຄັນໃນການບັນລຸການດຳລົງຊີບແບບຍືນຍົງ.

**ການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ**

ຜົນການສຶກສາຊີ້ໃຫ້ເຫັນວ່າ ການພັດທະນາການທ່ອງທ່ຽວໃນເຂດນີ້ຊ່ວຍຊຸກຍູ້ການນຳໃຊ້ຊັບພະຍາກອນທຳມະຊາດຍືນຍົງ ດ້ວຍການສ້າງແຮງຈູງໃຈທາງເສດຖະກິດ ແລະ ການປະຕິບັດແບບຍືນຍົງ. ໃນໄລຍະຜ່ານມາ, ຊຸມຊົນໄດ້ຮັບຜົນປະໂຫຍດທາງເສດຖະກິດ ເຊິ່ງເປັນທາງເລືອກທີ່ດີໃນການຫຼຸດຜ່ອນການເພິ່ງພາການຂຸດຄົ້ນຊັບພະຍາກອນທຳມະຊາດພຽງຢ່າງດຽວ. ແຜນຍຸດທະສາດການພັດທະນາຍັງລວມເອົາກົນໄກການແຈກຢາຍຜົນປະໂຫຍດດ້ານລາຍຮັບໃຫ້ແກ່ພາກສ່ວນກ່ຽວຂ້ອງ ເຊິ່ງສອດຄ່ອງກັບ ບຸນເລີດ ຈິດຕັ້ງວັດທະນາ (2005) ແນວຄິດການພັດທະນາການທ່ອງທ່ຽວຍືນຍົງແມ່ນຕ້ອງຄຳນຶງເຖິງການມີສ່ວນຮ່ວມດ້ານຜົນປະໂຫຍດຂອງຊຸມຊົນ. ນອກຈາກນີ້, ການສົ່ງເສີມການໃຊ້ໂຄງສ້າງພື້ນຖານທີ່ມີຜົນກະທົບຕ່ຳ ແລະ ການຈັດການສິ່ງເສດເຫຼືອຢ່າງຮັບຜິດຊອບ, ໂດຍມີຍຸດທະສາດສົ່ງເສີມການສ້າງເຮືອນພັກ ແລະ ສິ່ງອຳນວຍຄວາມສະດວກທີ່ເປັນມິດຕໍ່ສິ່ງແວດລ້ອມ. ຜົນການສຶກສານີ້ສອດຄ່ອງກັບ ສາຄອນ ກີ່ຈະເລີນ (2007) ໄດ້ໃຫ້ແນວຄິດການພັດທະນາແຫຼ່ງທ່ອງທ່ຽວຍືນຍົງ ປະກອບດ້ວຍການຮັກສາສິ່ງແວດລ້ອມ ແລະ ການໃຊ້ວັດສະດຸທ້ອງຖິ່ນ, ແລະ ຂອບເຂດທີ່ເໝາະສົມຂອງການພັດທະນາ. ນອກຈາກນີ້, ຍັງສອດຄ່ອງກັບ Scoones (1998) ທິດສະດີກອບການດຳລົງຊີບແບບຍືນຍົງ ເຊິ່ງເນັ້ນການຫຼີກລ້ຽງການທຳລາຍຊັບພະຍາກອນເພື່ອການຜະລິດທີ່ຍືນຍົງ ແລະ ການຫຼຸດຜ່ອນການເພິ່ງພາການນຳໃຊ້ຊັບພະຍາກອນເກີນຂອບເຂດ.

**ສະຫຼຸບຜົນການສຶກສາ**

**ບົດບາດຂອງປ່າສະຫງວນແຫ່ງຊາດພູຊຽງທອງຕໍ່ ການພັດທະນາການທ່ອງທ່ຽວ ທຳມະຊາດ ແລະ ການດຳລົງຊີບຂອງຊຸມຊົນທ້ອງຖິ່ນ**

**ບົດບາດຕໍ່ການພັດທະນາການທ່ອງທ່ຽວທຳມະຊາດ**

ຈຸດເດັ່ນຂອງປ່າສະຫງວນແຫ່ງນີ້ມີຄື: ທຳມະຊາດທີ່ຫຼາກຫຼາຍ ມີພູມສັນຖານຫີນທີ່ເປັນເອກະລັກ, ຄວາມສວຍງາມຂອງແມ່ນ້ຳຂອງ, ແລະປ່າໄມ້ທີ່ອຸດົມສົມບູນໄປດ້ວຍສັດປ່ານາໆຊະນິດ.ມໍລະດົກທາງວັດທະນະທຳ ມີສະຖານທີ່ປະຫວັດສາດ, ສະຖານທີ່ສັກສິດທາງສາສະໜາ ແລະ ວິຖີຊີວິດທີ່ເປັນເອກະລັກຂອງຊຸມຊົນທ້ອງຖິ່ນ. ກິດຈະກຳທ່ອງທ່ຽວ: ສາມາດຈັດກິດຈະກຳໄດ້ຫຼາກຫຼາຍ ເຊັ່ນ: ການຍ່າງປ່າ, ການລ່ອງເຮືອຄາຍັກ, ແລະ ການຂີ່ເຮືອຊົມທຳມະຊາດແມ່ນ້ຳຂອງ. ສະຫຼຸບແລ້ວ, ປ່າສະຫງວນແຫ່ງຊາດພູຊຽງທອງແມ່ນແຫຼ່ງທ່ອງທ່ຽວທຳມະ

ຊາດທີ່ຄົບວົງຈອນ, ລວມເອົາຄວາມງາມທາງທຳມະຊາດ ແລະ ມູນຄ່າທາງວັດທະນະທຳປະຫວັດສາດເຂົ້າກັນ.

**ບົດບາດຕໍ່ການດຳລົງຊີບຂອງຊຸມຊົນທ້ອງຖິ່ນ**

ປ່າສະຫງວນແຫ່ງຊາດພູຊຽງທອງມີບົດບາດສຳຄັນຕໍ່ການດຳລົງຊີບຂອງຊຸມຊົນທ້ອງຖິ່ນ, ໂດຍສະເພາະບ້ານສີງສຳພັນ ແລະ ບ້ານສຸລະ, ເຊິ່ງເພິ່ງພາທຳມະຊາດໃນປ່າແຫ່ງນີ້ຢ່າງແໜ້ນແຟ້ນ. ປ່າສະຫງວນເປັນພື້ນທີ່ສຳລັບກະສິກຳ ແລະ ລ້ຽງສັດ, ສະໜອງດິນທີ່ອຸດົມສົມບູນສຳລັບຜົດສອນຄົວ ແລະ ຕົ້ນໄມ້ໃຫ້ໝາກ, ພ້ອມທັງເໝາະສົມສຳລັບການລ້ຽງແບ້ ແລະ ງົວ. ນອກຈາກນີ້, ຍັງເປັນແຫຼ່ງອາຫານທີ່ສຳຄັນ, ສະໜອງຜັກຜັກ ແລະ ສັດປ່າຕາມລະດູການ. ທີ່ສຳຄັນ, ປ່າຍັງສະໜອງຊັບພະຍາກອນທີ່ຈຳເປັນໃນຊີວິດປະຈຳວັນ. ໂດຍລວມແລ້ວ, ປ່າສະຫງວນແຫ່ງນີ້ເປັນພື້ນຖານອັນຍືນຍົງຕໍ່ການດຳລົງຊີບ ແລະ ຄວາມໝັ້ນຄົງທາງເສດຖະກິດຂອງຊຸມຊົນ.

**ແຜນຍຸດທະສາດການພັດທະນາການທ່ອງທ່ຽວປ່າສະຫງວນແຫ່ງຊາດພູຊຽງທອງ ແລະ ສິ່ງທ້າທາຍຂອງການພັດທະນາການທ່ອງທ່ຽວ**

**ແຜນຍຸດທະສາດການພັດທະນາການທ່ອງທ່ຽວ**

ແຜນຍຸດທະສາດການພັດທະນາການທ່ອງທ່ຽວປ່າສະຫງວນແຫ່ງຊາດພູຊຽງທອງໄດ້ແບ່ງເຂດບຸລິມະສິດ (ເມືອງຊະນະສົມບູນ, ລະຄອນເພັງ, ຄົງເຊໂດນ) ໂດຍສະເພາະໃນໄລຍະອັນໃກ້ແມ່ນເນັ້ນໃສ່ບ້ານສີງສຳພັນ ແລະ ສຸລະ ເປັນຫຼັກ, ພ້ອມທັງຈະສືບຕໍ່ພັດທະນາກິດຈະກຳການທ່ອງທ່ຽວທີ່ອີງໃສ່ທຳມະຊາດ ເຊັ່ນ: ການຍ່າງປ່າ, ຕັ້ງຄ້າຍ, ແລະ ລ່ອງເຮືອ, ລວມທັງປັບປຸງສິ່ງອຳນວຍຄວາມສະດວກຕ່າງໆ ເຊັ່ນ: ທີ່ພັກແບບໂຮມສະເຕ, ຮ້ານອາຫານ, ແລະ ປັບປຸງເສັ້ນທາງເຂົ້າເຖິງ. ແຜນຍຸດທະສາດຍັງຮັບປະກັນການແຈກຢາຍຜົນປະໂຫຍດທາງການເງິນຈາກຄ່າທຳນຽມໃຫ້ແກ່ຊຸມຊົນ ແລະ ພາກສ່ວນກ່ຽວຂ້ອງເພື່ອສະໜັບສະໜູນການອະນຸຮັກ, ພ້ອມທັງມີການຈັດການສິ່ງແວດລ້ອມໂດຍການວາງກົດລະບຽບການຈັດການສິ່ງເສດເຫຼືອ ແລະ ໃຫ້ຄວາມຮູ້ແກ່ນັກທ່ອງທ່ຽວເພື່ອຫຼຸດຜ່ອນຜົນກະທົບ. ດ້ານການຕະຫຼາດ, ຈະເນັ້ນໃສ່ນັກທ່ອງທ່ຽວພາຍໃນ, ນັກທ່ອງທ່ຽວໄທ, ແລະ ແບັກແພັກເກີ້ສາກົນ ໂດຍການພັດທະນາຊ່ອງທາງສື່ສານທີ່ຫຼາກຫຼາຍທັງອອນລາຍ ແລະ ສິ່ງພິມ. ການຈັດການທ່ອງທ່ຽວນີ້ຍັງເນັ້ນການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ, ຕັ້ງແຕ່ລະດັບບ້ານຈົນເຖິງສູນກາງ, ເພື່ອຮັບຜິດຊອບຮ່ວມກັນໃນການພັດທະນາ, ບໍລິຫານ, ແລະ ແບ່ງປັນຜົນປະໂຫຍດ.

**ສິ່ງທ້າທາຍຂອງການພັດທະນາການທ່ອງທ່ຽວ**

ປ່າສະຫງວນແຫ່ງຊາດພູຊຽງທອງມີທ່າແຮງສູງດ້ານການທ່ອງທ່ຽວທຳມະຊາດແບບອະນຸຮັກ, ດ້ວຍຊັບພະຍາກອນອຸດົມສົມບູນທັງທຳມະຊາດ, ປະຫວັດສາດ, ແລະ ວັດທະນະທຳ. ແຕ່ກໍປະເຊີນສິ່ງທ້າທາຍຫຼາຍຢ່າງ: ຂາດແຫຼ່ງທຶນສຳລັບພື້ນຖານໂຄງລ່າງ (ໂດຍສະເພາະເສັ້ນທາງ), ຍັງຂາດຂໍ້ມູນທີ່ເລິກເຊິ່ງກ່ຽວກັບສະຖານທີ່, ຄວາມຍາກໃນການດຶງດູດການລົງທຶນເອກະຊົນຍ້ອນເປັນເຂດຍຸດທະສາດຊາຍແດນ, ຄວາມຂັດແຍ້ງລະຫວ່າງການທ່ອງທ່ຽວກັບການລ່າສັດແບບດັ້ງເດີມຂອງຊຸມຊົນ, ການຄຸກຄາມຄວາມງາມທຳມະຊາດຈາກການຕັດໄມ້ເພື່ອໝູນໃຊ້ໃນດຳລົງຊີບ ແລະ ໄຟປ່າ, ແລະ ການຂາດການມີສ່ວນຮ່ວມຂອງຊຸມຊົນໃນການຮັກສາສິ່ງແວດລ້ອມ.

**ທ່າແຮງຂອງການພັດທະນາການທ່ອງທ່ຽວປ່າສະຫງວນແຫ່ງຊາດພູຊຽງທອງຕໍ່ການດຳລົງຊີບແບບຍືນຍົງຂອງຊຸມຊົນທ້ອງຖິ່ນ**

**ການສ້າງອາຊີບ ແລະ ລາຍຮັບ**

ການພັດທະນາການທ່ອງທ່ຽວຢູ່ປ່າສະຫງວນແຫ່ງຊາດພູຊຽງທອງ, ໂດຍສະເພາະບ້ານສີງສຳພັນໃນໄລຍະຜ່ານມາ ແລະ ປະກອບກັບແຜນການພັດທະນາໃນຕໍ່ໜ້າ, ໄດ້ສ້າງ ແລະ ມີທ່າແຮງໃນການສ້າງໂອກາດດ້ານອາຊີບ ແລະ ລາຍຮັບຢ່າງຫຼວງຫຼາຍໃຫ້ແກ່ຊຸມຊົນທ້ອງຖິ່ນ, ທັງທາງກົງ ແລະ ທາງອ້ອມ. ຜົນປະໂຫຍດທາງກົງຄື ໄດ້ສ້າງອາຊີບບໍລິການທ່ອງທ່ຽວທີ່ເປັນທາງເລືອກໃໝ່ ເຊັ່ນ: ການນຳທ່ຽວ, ບໍລິການທີ່ພັກແຮມ, ການປຸງແຕ່ງອາຫານ, ການຂົນສົ່ງ, ແລະ ການຫັດຖະກຳ, ເຊິ່ງເປັນການເສີມສ້າງອາຊີບດັ້ງເດີມຂອງຊຸມຊົນເຊັ່ນ: ກະສິກຳ, ລ້ຽງສັດ, ແລະ ຫາປາ, ພ້ອມທັງສະໜອງລາຍຮັບເພີ່ມເຕີມທີ່ຍືນຍົງ. ເຖິງວ່າຈຳນວນວຽກໂດຍກົງອາດຈຳກັດ, ແຕ່ມັນໄດ້ສ້າງໂອກາດອາຊີບເສີມ ແລະ ການຈ້າງງານໃໝ່. ຊຸມຊົນກໍ່ໄດ້ຮັບຜົນປະໂຫຍດທາງອ້ອມ ຈາກການໃຊ້ຈ່າຍຂອງນັກທ່ອງທ່ຽວ ແລະ ການສະໜອງສິນຄ້າໃຫ້ແກ່ທຸລະກິດທ່ອງທ່ຽວ. ການສຸມໃສ່ແຫຼ່ງລາຍຮັບທີ່ຫຼາກຫຼາຍນີ້ຊ່ວຍສ້າງຮູບແບບເສດຖະກິດແບບຍືນຍົງ, ຫຼຸດຜ່ອນການເພິ່ງພາແຫຼ່ງລາຍຮັບດຽວ, ແລະ ຄາດວ່າຂະແໜງການທ່ອງທ່ຽວຈະກາຍເປັນແຫຼ່ງລາຍຮັບຫຼັກເປັນທາງເລືອກທີ່ສຳຄັນຂອງຊຸມຊົນໃນອະນາຄົດອີກ.

**ການສ້າງຄວາມເຂັ້ມແຂງແກ່ຊຸມຊົນ**

ນອກຈາກຜົນປະໂຫຍດທາງເສດຖະກິດ, ການພັດທະນາການທ່ອງທ່ຽວຢູ່ປ່າສະຫງວນແຫ່ງຊາດພູຊຽງທອງຍັງສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ. ເຊິ່ງໄລຍະຜ່ານມາ ແລະ ແຜນຍຸດທະສາດການທ່ອງທ່ຽວອະນຸຮັກສິ່ງເສີມຜູ້ປະກອບການຂະໜາດນ້ອຍ (ເຊັ່ນ: ໂຮມສະເຕ), ເຮັດໃຫ້ຊາວທ້ອງຖິ່ນມີສິດເປັນເຈົ້າຂອງເສດຖະກິດຂອງຕົນ. ພ້ອມກັນນັ້ນ, ຊຸມຊົນຍັງໄດ້ຮັບຜົນປະໂຫຍດຈາກການພັດທະນາພື້ນຖານໂຄງລ່າງ (ເສັ້ນທາງ, ສິ່ງອຳນວຍຄວາມສະດວກ) ແລະ ໂອກາດຝຶກອົບຮົມທັກສະ (ການ

ນຳທ່ຽວ, ການຕ້ອນຮັບ, ການອະນຸຮັກສິ່ງແວດລ້ອມ), ເຊິ່ງຊ່ວຍພັດທະນາຊັບພະຍາກອນມະນຸດ ແລະ ເປີດໂອກາດການຮຽນຮູ້.

**ສະຫວັດດີພາບ ຫຼື ຄວາມເປັນຢູ່ທີ່ດີ**

ການພັດທະນາການທ່ອງທ່ຽວແບບມີສ່ວນຮ່ວມຂອງຊຸມຊົນຢູ່ບ້ານສິງສຳພັນໄດ້ສ້າງຜົນປະໂຫຍດທາງດ້ານຈິດໃຈໃຫ້ແກ່ຜູ້ເຂົ້າຮ່ວມກຸ່ມບໍລິການທ່ອງທ່ຽວ. ພວກເຂົາພາກພູມໃຈຢ່າງແຮງກ້າໃນການປະກອບສ່ວນໃຫ້ແກ່ການທ່ອງທ່ຽວ, ໂດຍສະເພາະຜູ້ທີ່ໄດ້ຮັບການເຝິກອົບຮົມດ້ານທັກສະ, ເຊິ່ງສົ່ງຜົນດີຕໍ່ ຄວາມພໍໃຈໃນວຽກງານ ແລະ ສຸຂະພາບຈິດໃຈ-ຮ່າງກາຍ. ນອກຈາກນີ້, ການຮ່ວມມືໃນກິດຈະກຳທ່ອງທ່ຽວໄດ້ເສີມສ້າງຄວາມຮູ້ສຶກຄວາມເປັນສ່ວນໜຶ່ງຂອງຊຸມຊົນ ແລະ ສ້າງຄວາມສາມັກຄີ, ເຫັນໄດ້ຈາກຄວາມສຳພັນທາງສັງຄົມທີ່ດີຂຶ້ນເມື່ອທຽບກັບບ້ານທີ່ບໍ່ມີການພັດທະນາການທ່ອງທ່ຽວ. ລາຍຮັບຈາກການບໍລິການທ່ອງທ່ຽວ, ປະກອບກັບແຫຼ່ງລາຍຮັບອື່ນໆ, ໄດ້ປັບປຸງຄຸນນະພາບຊີວິດຂອງຊາວບ້ານ, ເຮັດໃຫ້ພວກເຂົາສາມາດລົງທຶນໃສ່ທີ່ຢູ່ອາໄສທີ່ດີຂຶ້ນ ແລະ ມີຄວາມຢູ່ດີກິນດີກວ່າເກົ່າ, ສະແດງເຖິງຄວາມສຳພັນທາງບວກລະຫວ່າງການທ່ອງທ່ຽວ ແລະ ສະຫວັດດີພາບຂອງຊຸມຊົນ.

**ການປັບຕົວຂອງຊຸມຊົນ**

ການພັດທະນາການທ່ອງທ່ຽວໄດ້ສະແດງໃຫ້ເຫັນເຖິງຄວາມສາມາດປັບຕົວຂອງຊຸມຊົນທ້ອງຖິ່ນໃນປ່າສະຫງວນແຫ່ງຊາດພູຊຽງທອງ, ໂດຍສະເພາະຊຸມຊົນບ້ານສິງສຳພັນໄດ້ມີສ່ວນຮ່ວມໃນໂຄງການອະນຸຮັກດອກກ້ວຍໄມ້ ແລະ ສັດປ່າທີ່ຫາຍາກ. ເຖິງວ່າການຮ່ວມມືໃນການອະນຸຮັກອາດຍັງບໍ່ສົມບູນແບບຍ້ອນການເພິ່ງພາທຳມະຊາດເປັນແຫຼ່ງອາຫານ ແລະ ລາຍໄດ້, ແຕ່ການທ່ອງທ່ຽວກໍໄດ້ກະຕຸ້ນໃຫ້ມີການປັບປ່ຽນວິຖີຊີວິດໃຫ້ສອດຄ່ອງກັບການພັດທະນາ ແລະ ການອະນຸຮັກທຳມະຊາດ. ນອກຈາກນີ້, ຊຸມຊົນຍັງມີຄວາມສາມາດປັບຕົວໃນການປັບປຸງສຸຂະອະນາໄມ ແລະ ຄວາມສະອາດສິ່ງແວດລ້ອມ ໂດຍສະເພາະໃນບັນດາຜູ້ທີ່ກ່ຽວຂ້ອງກັບການທ່ອງທ່ຽວ, ເຊິ່ງສົ່ງຜົນດີຕໍ່ຄຸນນະພາບຊີວິດໂດຍລວມຂອງຊຸມຊົນ ແລະ ສະພາບແວດລ້ອມ.

**ການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ**

ການພັດທະນາການທ່ອງທ່ຽວທຳມະຊາດສົ່ງເສີມ ການນຳໃຊ້ຊັບພະຍາກອນແບບຍືນຍົງ ໂດຍສ້າງແຮງຈູງໃຈທາງເສດຖະກິດເພື່ອການອະນຸຮັກ. ລາຍຮັບຈາກການທ່ອງທ່ຽວສາມາດນຳໄປໃຊ້ໃນການປົກປັກຮັກສາປ່າໄມ້ ແລະ ຕ້ານການລ່າສັດ, ເຮັດໃຫ້ຊຸມຊົນມີສ່ວນຮ່ວມໃນການວາງແຜນ ແລະ ຄຸ້ມຄອງ. ການສະໜອງລາຍຮັບທາງເລືອກຊ່ວຍຫຼຸດຜ່ອນການເພິ່ງພາກິດຈະກຳທີ່ທຳລາຍສິ່ງແວດລ້ອມ, ສົ່ງເສີມຄວາມເປັນເຈົ້າຂອງທຳມະຊາດ. ພ້ອມກັນນັ້ນ, ແຜນການພັດທະນາເຊັ່ນວ່າດ້ານທີ່ພັກແມ່ນຈະປະຕິບັດການທ່ອງທ່ຽວແບບຍືນຍົງ ເຊັ່ນ: ການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການໃຊ້ວັດສະດຸທີ່ເປັນມິດກັບສິ່ງແວດລ້ອມ, ຊ່ວຍສ້າງຄວາມສົມດຸນລະຫວ່າງການອະນຸຮັກ ແລະ ການນຳໃຊ້ຊັບພະຍາກອນ ເພື່ອຜົນປະໂຫຍດຍາວນານຂອງຊຸມຊົນ ແລະ ທຳມະຊາດ.

**ຂໍ້ສະເໜີແນະ**

**ຂໍ້ສະເໜີຕໍ່ໜ່ວຍງານພາກລັດທີ່ກ່ຽວຂ້ອງ**

1) ຄວນມີການສຶກສາຂໍ້ມູນປະຫວັດສາດຄວາມເປັນມາທາງທໍລະນີວິທະຍາ ເຊັ່ນ: ແຜ່ນຫີນສີລາ, ຫີນລະຄອນ, ຫີນຂ້ອງ ເພື່ອກຳນົດຄຸນຄ່າ ແລະ ສົ່ງເສີມສະຖານທີ່ທ່ອງທ່ຽວ.

2) ພາກສ່ວນຄຸ້ມຄອງປ່າສະຫງວນຄວນມີລະບຽບການທີ່ຮັດກຸມໃນການປົກປັກຮັກສາສັດປ່າທີ່ຫາຍາກ ແລະ ພືດພັນພື້ນເມືອງທີ່ສຳຄັນ.

3) ຄວນສ້າງລະບຽບຮອງຮັບໃຫ້ນັກທ່ອງທ່ຽວໄທທີ່ຂ້າມດ່ານປະເພ ນີສາມາດຂຶ້ນຊົມສະຖານທີ່ສຳຄັນ ເຊັ່ນ: ພູຂ້ອງເຂດບ້ານສິງສຳພັນ, ເພື່ອສົ່ງເສີມການທ່ອງທ່ຽວແບບນອນຄ້າງຄືນ ແລະ ດຶງດູດການລົງທຶນຈາກພາກເອກະຊົນ.

4) ຄວນມີການຮ່ວມມືລະຫວ່າງແຂວງຈຳປາສັກ ແລະ ສາລະວັນ ຈັດຕັ້ງປະຕິບັດລະບຽບການ ແລະ ແຜນພັດທະນາທີ່ເປັນເອກະພາບກັນ ເພື່ອຮັບປະກັນການຄຸ້ມຄອງການທ່ອງທ່ຽວຍືນຍົງ.

**ຂໍ້ສະເໜີແນະຕໍ່ຊຸມຊົນທ້ອງຖິ່ນ**

1) ຊຸມຊົນຄວນຮ່ວມມືຢ່າງເຂັ້ມງວດໃນການອະນຸຮັກປ່າສະຫງວນ, ຮັກສາພັນພືດສຳຄັນ ແລະ ລະມັດລະວັງການໃຊ້ໄຟເພື່ອປ້ອງກັນໄຟໄໝ້ປ່າ, ເຊິ່ງຈະທຳລາຍລະບົບນິເວດ ແລະ ຄວາມງາມຂອງປ່າ.

2) ຊຸມຊົນຄວນຮ່ວມກັນປະຕິບັດລະບຽບການຈັດການສິ່ງເສດເຫຼືອຢ່າງເຄັ່ງຄັດ, ໂດຍການຖິ້ມຂີ້ເຫຍື້ອໃນບ່ອນທີ່ຈັດໄວ້ໃຫ້ ແລະ ບໍ່ຖິ້ມຊະຊາຍຕາມທາງຍ່າງ ຫຼື ສະຖານທີ່ທ່ອງທ່ຽວເພື່ອຮັກສາຄວາມສະອາດຂອງແຫຼ່ງທ່ອງທ່ຽວ.

**ຄຳຂອບໃຈ**

ການຄົ້ນຄວ້າ "ທ່າແຮງຂອງການພັດທະນາການທ່ອງທ່ຽວທຳມະຊາດເພື່ອສົ່ງເສີມການດຳລົງຊີບແບບຍືນຍົງຂອງຊຸມຊົນທ້ອງຖິ່ນໃນເຂດປ່າສະຫງວນແຫ່ງຊາດພູຊຽງທອງແຂວງຈຳປາສັກ" ຂອງພວກຂ້າພະເຈົ້າໃນຄັ້ງນີ້ ໄດ້ຮັບຜົນສຳເລັດໄປດ້ວຍດີ ກໍຍ້ອນໄດ້ຮັບທຶນສະໜັບສະໜູນຈາກງົບປະມານຂອງລັດຖະບານ ສປປ ລາວ ໂດຍຜ່ານມະຫາວິທະຍາໄລແຫ່ງຊາດ. ດັ່ງນັ້ນ ທີມງານຄົ້ນຄວ້າ ຈຶ່ງຂໍຂອບໃຈມາຍັງຄະນະກຳມະທິການວິຊາການ ມະຫາວິທະຍາໄລແຫ່ງຊາດ ທີ່ໄດ້ອະນຸມັດໃຫ້ເຮັດການວິໄຈໃນເລື່ອງນີ້ ແລະ ຂໍຂອບໃຈ ການຈັດຕັ້ງຂອງ

ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ແລະ ຫ້ອງການແຜນການ-ການເງິນ ມະຫາວິທະຍາໄລແຫ່ງຊາດ ທີ່ອຳນວຍຄວາມສະດວກ ໃນດ້ານການກວດສອບເນື້ອໃນບົດ ແລະ ສະໜອງດ້ານງົບປະມານສຳລັບການຄົ້ນຄວ້າຄັ້ງນີ້.

ຂໍຂອບໃຈຢ່າງສູງມາຍັງ ອຈ.ປອ ນາງ ສາລີກາ ອ່ອນສີ ຫົວໜ້າພະແນກຄົ້ນຄວ້າ ແລະ ບໍລິການວິຊາການ ຄະນະວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ ທີ່ເສຍສະຫຼະເວລາອັນມີຄຸນຄ່າ ເພື່ອໃຫ້ຄຳປຶກສາແນະນຳວິທີການ ແລະ ກວດແກ້ເນື້ອໃນບົດຄົ້ນຄວ້າໃນຄັ້ງນີ້ຈົນໄດ້ຮັບຜົນສຳເລັດໄປດ້ວຍດີ.

**ເອກະສານອ້າງອີງ**

ກະຊວງແຜນການ ແລະ ການລົງທຶນ. (2019). *ຍຸດທະສາດການຈະເລີນເຕີບໂຕສີຂຽວຮອດປີ 2030*. ນະຄອນຫຼວງວຽງຈັນ: ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ.

ກົມພັດທະນາການທ່ອງທ່ຽວ. (2021). *ບົດລາຍງານສະຖິຕິນັກທ່ອງທ່ຽວໃນປະເທດລາວ*. ນະຄອນຫຼວງວຽງຈັນ: ພະແນກວິໄຈການທ່ອງທ່ຽວ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ສາຄອນ ກີ່ຈະເລີນ. (2007). *ການທ່ອງທ່ຽວແບບອະນຸຮັກ*. ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ນິຄົມ ຈາຣຸມະນີ . (1993). *ການພັດທະນາແຫຼ່ງທ່ອງທ່ຽວທຳມະຊາດ ແລະ ວັດທະນະທຳ*. ກຸງເທບ: ສຳນັກພິມໂອດຽນສະໂຕ .

ບຸນເລີດ ຈິດຕັ້ງວັດທະນາ. (2005). *ອຸດສາຫະກຳການທ່ອງທ່ຽວທີ່ບໍ່ມີວັນຕາຍຂອງປະເທດໄທ*. ຊຽງໃໝ່: ຄະນະມະນຸດສາດ ມະຫາໄລຊຽງໃໝ່.

ພະຍອມ ທຳມະບຸດ. (2006 ). *ເອກະສານການຮຽນການສອນຂອງສະຖາບັນການທ່ອງທ່ຽວເພື່ອອະນຸຮັກສິ່ງແວດລ້ອມປະເທດໄທ*. ກຸງເທບ: ມະຫາວິທຍາໄລສີນະຄະຣິນວິໂຣດ.

ວິໄຊ ເພຍໄຊ. (2012 ). *ຄວາມເປັນໄປໄດ້ໃນການພັດທະນາແຫຼ່ງທ່ອງທ່ຽວແບບອະນຸຮັກແກ້ງເສືອເຕັ້ນ ບ້ານປຸ່ງປ່າຕ່າວ ເມືອງຄຳເກີດ ແຂວງບໍລິຄຳໄຊ*. ນະຄອນຫຼວງວຽງຈັນ: ຄະນະວິທະຍາສາດສັງຄົມ, ມະຫາວິທະຍາໄລແຫ່ງຊາດລາວ.

Anggraini, R. I., & Gunawan, B. (2021). Ecotourism development in National Parks: A new paradigm of forest management in Indonesia. *E3S Web of Conferences, 249, 03010*, 24.

Das, N. (2021). Ecotourism as a means of sustaining livelihood, wildlife management and biodiversity conservation-a case in Nameri National Park of Assam: India. *The International Grassland Congress Proceedings1(1)*, 45-53.

GPEDC. (2022). *Lao - National Socio-Economic Development Plan (2021-2025).* Vientaine, Lao PDR: Global Partnership for Effective Development Co-operation.

Koki, J. N. (2017). Contribution of ecotourism towards sustainable livelihood of the communities living on Wasini Island, Kwale County, Kenya. *Journal of Tourism and Hospitality Management, 5(3)*, 106–125.

Scoones, I. (1998). Sustainable rural livelihoods: A framework for analysis (Working Paper No. 72). Brighton: Institute of Development Studies.

Tefera, C. A. (2014). *Tourism for sustainable livelihood in protected areas: The case of Nachsar National Park, Ethiopia.* Wageningen University: Research Centre.

United Nations. (2020). *Social-economic impact assessment of Covid-19 on Lao PDR.* Vientiane, Lao PDR.: UN Country Team .

United Nations in Lao PDR. (2023). *UN Country Annual Results Report 2023.* Lao PDR : United Nations .

United Nations World Tourism Organization. (2020). *Supporting jobs and economies through travel and tourism: A call for action to mitigate the social-economic impact of Covid-19 and accelerate recovery.* Madrid, Spain: UNWTO.

World Bank Group. (2020). *Developing Nature-Based Tourism as a Strategic Sector for Green Growth in Lao PDR.* Vientiane: The World Bank.